(໑)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1328/ອຄ.ທລວ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2015

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ

- ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ

ເລື່ອງ: ບັນຊີປະເພດທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ (ສະບັບປັບປຸງ / ຄັ້ງ 02-2015)

- ອີງໃສ່ມາດຕາ 13 ຂອງຂໍ້ຕົກລົງ, ເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015, ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ;

- ອີງຕາມ ຂໍ້ 1 (ດ້ານເນື້ອໃນເອກະສານ) ຕາມໜັງສືແຈ້ງຂອງກົມການຄ້າພາຍໃນ, ສະບັບເລກທີ 0515/ຄພນ.ຄຕສ, ລົງວັນທີ 17 ມິຖຸນາ 2015 ;

- ອີງຕາມໜັງສືສະເໜີ ຂອງຫ້ອງວ່າການທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 685/ຫກ, ລົງວັນທີ 16/10/2013 ກ່ຽວກັບການເພີ່ມທຸລະກິດໂຮງຊວດຈຳ ເຂົ້າໃນບັນຊີປະເພດທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ.

ເພື່ອຮັກສາ ບາງປະເພດທຸລະກິດທີ່ມີຄວາມສຳຄັນ ແລະ ຈຳເປັນ ສຳລັບປະຊາຊົນລາວບັນດາເຜົ່າ ໃນການປະກອບທຸລະກິດ ສ້າງວຽກເຮັດງານທຳ ສ້າງລາຍໄດ້ໃຫ້ມີຄວາມໝັ້ນຄົງ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ (ບົນພື້ນຖານ ການຄົ້ນຄວ້າ ສະເໜີຂອງບັນດາຂະແໜງການກ່ຽວຂ້ອງ), ແຈ້ງ ກ່ຽວກັບການປັບປຸງ ບາງລາຍການປະເພດທຸລະກິດ ໃນ (ບັນຊີ ຄັ້ງ 01-2013) ມາເປັນ (ບັນຊີ ຄັ້ງ 02-2015) ມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ແມ່ນປະເພດທຸລະກິດ ທີ່ເປັນມູນເຊື້ອອັນຍາວນານຂອງປະຊາຊົນບັນດາເຜົ່າ, ປະເພດທຸລະກິດທີ່ບໍ່ຈຳເປັນຕ້ອງໃຊ້ຄວາມຮູ້ສູງ ຫລື ທຶນຮອນຫຼາຍໃນການປະກອບທຸລະກິດ ຫລື ທຸລະກິດບາງປະການ ທີ່ລັດປະສົງຢາກສະຫງວນໄວ້ສຳລັບພົນລະເມືອງລາວ ເພື່ອຮັກສາໄວ້ ຊຶ່ງທຸລະກິດທີ່ມີຄວາມສຳຄັນຈຳເປັນ ຫລື ທຸລະກິດທີ່ເປັນເອກະລັກຂອງຊາດ ໃຫ້ຢູ່ຄູ່ຄົນລາວ ສ້າງວຽກເຮັດ

ງານທຳ ສ້າງລາຍໄດ້ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ. ພົນລະເມືອງລາວ ໝາຍເຖິງບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັນຊາດ ;

2. ບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ (ສະບັບປັບປຸງ / ຄ່ 02–2015 (ຄັດຕິດມາພ້ອມນີ້) ;

3. ການອະນຸຍາດ ຫລື ຂຶ້ນທະບຽນວິສາຫະກິດ ໃຫ້ບຸກຄົນ ຫລື ນິຕິບຸກຄົນທີ່ບໍ່ຖືກຕ້ອງ ຕາມແຈ້ງການ ສະບັບນີ້ ລ້ວນແຕ່ເປັນໂມຄະ. ຜູ່ລະເມີດ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ;

4. ພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ ຕ້ອງມີນິຕິກຳ ດັດສົມລະອຽດ ຈະແຈ້ງ ຕໍ່ທຸກລາຍການປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດ;

5. ໃນໄລຍະຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ຫາກພາກສ່ວນ ຫລື ຂະແໜງການໃດ ເຫັນວ່າມີອັນຍັງບໍ່ທັນສອດຄ່ອງ ຢາກເພີ່ມເຂົ້າ ຫລື ຕັດອອກຈາກບັນຊີດັ່ງກ່າວ ໃຫ້ແຈ້ງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປັບປຸງ ປະກາດໃຊ້ເພີ່ມເຕີມຕໍ່ໄປ ;

6. ແຈ້ງການສະບັບນີ້, ປ່ຽນແທນແຈ້ງການ, ສະບັບເລກທີ 1590/ອຄ.ທຄວ, ລົງວັນທີ 26 ສິງຫາ 2013 ກ່ຽວກັບບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລ/ມ. ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ຮອງລັດຖະມົນຕີ

ຊຸງວ່ສະຫວາດ ສະແຫວງສຶກສາ